**ສາທາລະນະລັດປະຊາທິປະໄຕປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

-----------000----------

ສໍານັກງານນາຍົກລັດຖະມົນຕີ

ເລກທີ....85..../ນຍ

ນະຄອນຫຼວງວຽງຈັນ, ວັນທີ 11/06/2004

# ດໍາລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ຍຸດທະສາດການສຶກສາ ແລະ ສ້າງຈິດສໍານຶກ ດ້ານສິ່ງແວດລ້ອມ ຮອດ ປີ 2020, ແຜນດໍາເນີນງານ ປີ 2006 - 2010.

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ ລາວ ສະບັບເລກທີ 02/ສພຊ ລົງວັນທີ 6 ພຶດສະພາ 2003.
- ອີງຕາມ ກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 09/ສປປ ລົງວັນທີ 26 ເມສາ 1999.
- ອີງຕາມ ເອກະສານສະເໜີ ຂອງອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລອ້ມ ສະບັບ ເລກທີ 0772 / ອວຕສ-ສນຍ ລົງວັນທີ 29 ເມສາ 2004.

**ນາຍົກລັດຖະມົນຕີອອກດໍາລັດ:**

<u>ມາດຕາ 1:</u> ຮັບຮອງ ແລະ ປະກາດໃຊ້ ຍຸດທະສາດ ການສຶກສາ ແລະ ສ້າງຈິດສໍານຶກ ດ້ານສິ່ງແວດລ້ອມ ຮອດ ປີ 2020, ແຜນດໍາເນີນງານ ປີ 2006-2010 ຕາມທີ່ລັດຖະມົນຕີ ປະຈໍາ ສໍານັກງານ ນາຍົກລັດ ຖະມົນຕີ, ຫົວໜ້າອົງການ ວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໄດ້ ລົງລາຍເຊັນ ຄັ້ງວັນທີ 08 ມິຖຸນາ 2004.

<u>ມາດຕາ 2:</u> ມອບໃຫ້ ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສົມທົບກັບພາກສ່ວນກ່ຽວ ຂ້ອງ ຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດ ຍຸດທະສາດ ແລະ ແຜນດໍາເນີນງານ ດັ່ງກ່າວ ໃຫ້ປະກົດຜົນເປັນຈິງ.

<u>ມາດຕາ 3:</u> ບັນດາ ກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫຼວງວຽງຈັນ, ເຂດພິເສດ ແລະ ພາກສ່ວນ ທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນ ຈັດຕັ້ງ ປະຕິບັດ ດໍາລັດ ສະບັບນີ້ ໃຫ້ໄດ້ຮັບຜົນ ເປັນຢ່າງດີ.

<u>ມາດຕາ 4:</u> ດໍາລັດ ສະບັບນີ້ ມີຜົນສັກສິດ ນັບແຕ່ ວັນລົງລາຍເຊັນ ເປັນຕົ້ນໄປ. ທຸກຂໍ້ກໍານົດ ແລະ ລະບຽບ ການຕ່າງໆ ທີ່ຂັດກັບເນື້ອໃນຂອງດໍາລັດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ນາຍົກລັດຖະມົນຕີ**